ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************************

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 1141
ວັນທີ 09 NOV 2015
ໂທລະສັບ 021 217770

ເລກທີ 65 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 09 NOV 2015

## ບົດບັນທຶກກອງປະຊຸມ

ສ່ອງແສງວຽກງານສາຍລັດປະຈຳເດືອນ 10 ຂອງປີ 2015.

ໃນຕອນບ່າຍ ຂອງວັນທີ 05 ພະຈິກ 2015 ເວລາ 13:30 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ຊັ້ນ IV ທຫລ, ໄດ້ຈັດກອງປະຊຸມສ່ອງແສງວຽກງານສາຍລັດປະຈຳເດືອນ 10 ຂອງປີ 2015. ໂດຍການເປັນປະທານຂອງ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ. ຊຶ່ງມີບັນດາຫົວໜ້າກົມ, ຮອງຫົວໜ້າກົມ, ຜູ້ອຳນວຍການທະນາຄານທຸລະກິດລັດ ແລະ ຜູ້ຕາງໜ້າກົມ ເຂົ້າຮ່ວມ (ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມໄດ້ຄັດຕິດມາພ້ອມນີ້).

ບັນດາທ່ານເຂົ້າຮ່ວມກອງປະຊຸມ ໄດ້ລາຍງານສະພາບພົ້ນເດັ່ນການຈັດຕັ້ງປະຕິບັດວຽກງານໃນກົມກອງຂອງຕົນໃນໄລຍະໜຶ່ງເດືອນຜ່ານມາ ແລະ ແຜນການໃນເດືອນຕໍ່ໄປ ພ້ອມນີ້, ຍັງມີຂໍ້ສະເໜີເຖິງກົມກ່ຽວຂ້ອງ.

ຜ່ານການຮັບຟັງການຈັດຕັ້ງປະຕິບັດວຽກງານອັນພົ້ນເດັ່ນໃນໄລຍະໜຶ່ງເດືອນຜ່ານມາ ແຕ່ລະກົມກອງໄດ້ເອົາໃຈໃສ່ປະຕິບັດວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດໃນຫຼາຍໆດ້ານ. ເຖິງຢ່າງໃດກໍ່ຕາມ ກໍ່ຍັງມີບາງວຽກງານທີ່ຄົງຄ້າງ ແລະ ມີບາງຂໍ້ສະເໜີຈາກບາງກົມກອງ. ເພື່ອສືບຕໍ່ຈັດຕັ້ງປະຕິບັດແກ້ໄຂຂໍ້ຄົງຄ້າງດັ່ງກ່າວ ແລະ ຂໍ້ສະເໜີ ຂອງບັນດາກົມທີ່ສະເໜີ ກອງປະຊຸມຈຶ່ງມີທິດທາງໃນການຈັດຕັ້ງປະຕິບັດດັ່ງນີ້:

1. ວຽກງານເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ໃຫ້ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ປະສານສົມທົບກັບທະນາຄານທຸລະກິດ ເພື່ອປຶກສາຫາລືກັນ ໃນການແກ້ໄຂໜີ້;
2. ຂໍທ່າງອນ ທີ່ກຳລັງປ້ອງກັນປະກອບອາວຸດໄດ້ເຄື່ອນຍ້າຍອອກນັ້ນ ແມ່ນມອບໃຫ້ສູນບໍລິການເກັບກູ້ໜີ້ ແລະ ຮັບຝາກເກັບໜີ້ປະສານສົມທົບກັບ ຫ້ອງການ ທຫລ ເພື່ອປະສານໄປຍັງກຳລັງປ້ອງກັນ ໃຫ້ສາມາດຮັບປະກັນທາງດ້ານຄວາມປອດໄພ ເນື່ອງຈາກໃນໄລຍະນີ້ ແລະ ຕໍ່ໜ້າແມ່ນຍິ່ງເປັນໄລຍະທີ່ສຳຄັນ ຊຶ່ງຈະມີກອງປະຊຸມ ແລະ ວັນສຳຄັນຕ່າງໆຂອງຊາດ;
3. ການສະເໜີປັບປຸງຕຳແໜ່ງງານຂອງ ທສກ ແລະ ພທລ ແມ່ນໃຫ້ທັງສອງທະນາຄານສົມທົບກັບຄະນະກວດກາສະເພາະກິດ ແລະ ກົມຈັດຕັ້ງແລະພະນັກງານ ເພື່ອນຳສະເໜີທ່ານ ຮອງຜູ້ວ່າການ ທຫລ ຜູ້ຊີ້ນຳວຽກງານປັບປຸງໂຄງສ້າງຂອງສອງທະນາຄານ ພິຈາລະນາ;

4. ກ່ຽວກັບສະຖານທີ່ປ່ຽນເງິນປະເພດໃບນ້ອຍ ແລະ ພະນັກງານ ຫຼື ບຸກຄົນມາຈາກພາກສ່ວນອື່ນ ທີ່ນຸ່ງຖືບໍ່ສຸພາບ ເຂົ້າມາໃນສະຖານທີ່ ທຫລ ແມ່ນມອບໃຫ້ຫ້ອງການ ທຫລ ເປັນຜູ້ຄົ້ນຄວ້າບ່ອນປ່ຽນເງິນທີ່ເໝາະສົມ ພ້ອມນັ້ນ ປະສານສົມທົບກັບເຈົ້າໜ້າທີ່ ເພື່ອແຈ້ງໃຫ້ຜູ້ທີ່ເຂົ້າມາໃນ ທຫລ ຕ້ອງປະຕິບັດຕາມແຈ້ງການ ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຮັກສາຄວາມປອດໄພ ຂອງສໍານັກງານ;

5. ການຂາດເຂີນຄູສອນໃນ ສະຖາບັນການທະນາຄານ ນັ້ນແມ່ນມອບໃຫ້ ສະຖາບັນການທະນາຄານ ສົມທົບກັບ ກົມຈັດຕັ້ງ ແລະພະນັກງານ ເພື່ອນໍາສະເໜີ ທ່ານ ຮອງຜູ້ວ່າການ ທຫລ ຜູ້ຊີ້ນໍາວຽກງານຈັດຕັ້ງແລະພະນັກງານ ພິຈາລະນາ;
6. ຕໍ່ກັບວຽກງານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນມອບໃຫ້ໜ່ວຍ ງານເຮັດຈົດໝາຍວຽນ ແຈ້ງໃຫ້ພາກສ່ວນກ່ຽວຂ້ອງ ແລະ ບັນດາກົມ ຮັບຊາບຕໍ່ກັບຄວາມຄືບໜ້າຂອງວຽກງານດັ່ງກ່າວ ແລະ ສະພາບຂອງ ສປປ ລາວ ໃນແຕ່ລະໄລຍະ. ພ້ອມທັງ ໃຫ້ສ້າງ Format ຂອງແບບຟອມ STR ໃຫ້ບັນດາກົມທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການສ້າງແບບຟອມສະເພາະຂອງເຂົາເຈົ້າ. ນອກນັ້ນ, ໃຫ້ກໍ່ໃຫ້ກົມກ່ຽວຂ້ອງ ຄົ້ນຄວ້າຫາຊ່ອງທາງກ່ຽວກັບການຊໍາລະສະສາງກັບບັນຊີຢູ່ຕ່າງປະເທດໄວ້ ວ່າຈະໃຊ້ຊ່ອງທາງໃດກໍລະນີ ສປປ ລາວ ຕົກຢູ່ໃນບັນຊີດໍາ ເພາະທະນາຄານທຸລະກິດອາດຈະຖືກທະນາຄານຕົວແທນໃນການຊໍາລະສະສາງຕ່າງປະເທດປິດບັນຊີ. ໂດຍສະເພາະ ໃຫ້ຖອດຖອນບົດຮຽນ ຈາກປະເທດລັດເຊຍ ແລະ ສປ.ຈີນ ແມ່ນເຮັດຄືແນວໃດ;
7. ຕິດພັນກັບບັນຫາບໍລິສັດ PS ແລະ ບໍລິສັດແມັກຄີ ມອບໃຫ້ກົມກ່ຽວຂ້ອງ (ກົມຄຸ້ມຄອງທະນາຄານທຸລະກິດກົມຄຸ້ມຄອງສະຖາບັນການເງິນ ແລະ ໜ່ວຍງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການ ຮ້າຍ) ສົມທົບກັນ ສັງລວມຂໍ້ມູນໃຫ້ເຫັນເປັນອັນລວມ ເພື່ອສະໜອງໃຫ້ແກ່ເຈົ້າໜ້າທີ່ຕໍາຫຼວດດໍາເນີນຕາມຂັ້ນຕອນ;
8. ກ່ຽວກັບການສະເໜີຂໍກູ້ຢືມຂອງລູກຄ້າ ( ທສກ ແລະ ທພລ ) ເນື່ອງຈາກໄລຍະນີ້ ເປັນໄລຍະທີ່ກໍາລັງດໍາເນີນການປັບປຸງໂຄງສ້າງ, ການສະເໜີຂໍກູ້ຢືມຂອງລູກຄ້າລາຍໃຫຍ່ ຕ້ອງໄດ້ຜ່ານການພິຈາລະນາຂອງຄະນະສະເພາະກິດ ກໍ່ຄື ທຫລ. ສະນັ້ນ ໃຫ້ຫາວິທີຊ່ອງທາງ ໃນການແນະນໍາລູກຄ້າຕື່ມກ່ຽວກັບບັນຫານີ້;
9. ໃຫ້ທະນາຄານທຸລະກິດກວດກາເບິ່ງຕູ້ ATM ຂອງຕົນ ເພື່ອໃຫ້ມີຄວາມພ້ອມ ແລະ ຮັບປະກັນໃນການໃຊ້ງານຕາມສະຖານທີ່ຕິດຕັ້ງຕ່າງໆ;
10. ສໍາລັບການສະເໜີຂໍອຸປະກອນຄອມພິວເຕີ້ຂອງກົມພົວພັນສາກົນ ເຫັນວ່າຖ້າຢູ່ໃນແຜນກໍ່ຄວນແກ້ໄຂໃຫ້ກົມດັ່ງກ່າວ, ມອບໃຫ້ ຫ້ອງການ ທຫລ ຄົ້ນຄວ້າພິຈາລະນາ;
11. ໃຫ້ແຕ່ລະກົມເອົາໃຈໃສ່ເປັນເຈົ້າການໃນການສຶກສາອົບຮົມ ພະນັກງານຂອງຕົນຕື່ມ ເພື່ອໃຫ້ພະນັກງານເຂົ້າໃຈເຖິງພາລະບົດບາດ ຂອງຕົນ ໃນບ່ອນສັງກັດຢູ່ ເພື່ອສະດວກ ແລະ ເຂົ້າໃຈໃນການປະຕິບັດວຽກງານ;
12. ສໍາລັບການບໍາລຸງກໍ່ສ້າງພະນັກງານ ແມ່ນໃຫ້ກົມຈັດຕັ້ງແລະພະນັກງານ ຄົ້ນຄວ້າລະດັບຂັ້ນ ແລະ ເປົ້າໝາຍໃຫ້ແທດເໝາະກັບຫຼັກສູດການຝຶກອົບຮົມແຕ່ລະປະເພດ. ຖ້າຫາກຫຼັກສູດໃດເໝາະສົມກັບພະນັກງານບັນຈຸໃໝ່ ກໍ່ໃຫ້ເບິ່ງຄືນຕໍ່ກັບເງື່ອນໄຂ ເນື່ອງຈາກວ່າບາງຫຼັກສູດອາດຈະເໝາະກັບພະນັກງານໃໝ່ ແລະ ບອກກັບຄວາມກະຕືລືລົ້ນຕໍ່ການຢາກຮຽນຮູ້ຂອງພະນັກງານ;

ນອກຈາກນັ້ນ, ປະທານກອງປະຊຸມ ຍັງໄດ້ເນັ້ນໜັກກ່ຽວກັບການຄຸ້ມຄອງຄວາມໝັ້ນຄົງຂອງທະນາຄານ ລວມໄປເຖິງຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ. ທະນາຄານທຸລະກິດກໍ່ໃຫ້ເອົາໃຈໃສ່ຕື່ມກ່ຽວກັບການແກ້ໄຂໜີ້ NPL, ເອົາໃຈໃສ່ຄຸ້ມຄອງຄວາມສ່ຽງ ພ້ອມນັ້ນ ໃຫ້ຕິດຕາມຜັນຂະຫຍາຍແຜນການຂອງລັດ ຕິດພັນກັບປ່ອຍສິນເຊື່ອເພື່ອສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄໍ້າປະກັນສະບຽງອາຫານຕື່ມ ເພາະເຫັນວ່າ ຜ່ານມາທະນາຄານທຸລະກິດກໍ່ໄດ້ປະກອບສ່ວນຫຼາຍ ແຕ່ກໍ່ບໍ່ເກີດດອກອອກຜົນເທົ່າທີ່ຄວນ. ມາຮອດປະຈຸບັນ ຄະນະຮັບຜິດຊອບ ຂອງລັດຖະບານ ໄດ້ຄົ້ນຄວ້າກ່ຽວກັບໂຄງການຄໍ້າປະກັນສະບຽງອາຫານລະອຽດພໍສົມຄວນ, ຖ້າໂຄງການດັ່ງກ່າວຄົ້ນຄວ້າສໍາ

ເລັດອາດຈະມີບ້ວງເງິນ ສະເພາະໂຄງການ ຊຶ່ງແຜນດັ່ງກ່າວນັ້ນ ແມ່ນຢູ່ເກືອບທຸກເມືອງ ທຸກແຂວງ. ສ່ວນວຽກງານອື່ນໆຂອງບັນດາກົມ ແມ່ນໃຫ້ສືບຕໍ່ປະຕິບັດຕາມແຜນທີ່ໄດ້ຂຶ້ນໄວ້ໃຫ້ສຳເລັດ.

ກອງປະຊຸມໄດ້ປິດລົງໃນເວລາ 16:30 ໂມງ ຂອງວັນດຽວກັນ.

**ປະທານກອງປະຊຸມ**

ວັດທະນາ ດາລາລອຍ

ຜູ້ບັນທຶກ.

ອາພິລົມ ວິໄລທົງ